ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 03840/ກພສ

ນະຄອນຫຼວງວຽງຈັນ,ວັນທີ 07 ມິຖຸນາ 2023

ຮຽນ: ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. ທີ່ນັບຖື,

ເລື່ອງ: ການຈັດຕັ້ງປະຕິບັດ ສາລະບານສິນຄ້າ ລຸ້ນປີ 2022 (AHTN 2022).

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021;
- ອີງຕາມດຳລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸນປີ 2022 (AHTN 2022) ເລກທີ 91/ນຍ, ລົງວັນທີ 16 ມັງກອນ 2023.
- ອີງຕາມແຈ້ງການຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງປະຕິບັດສາລະບານສິນຄ້າລະບົບເອກະພາບອາຊຽນລຸ້ນປີ 2022 (AHTN 2022), ສະບັບເລກທີ 0637/ກງ, ລົງວັນທີ 01 ມີນາ 2023.

ກົມພາສີ ຂໍຮຽນລາຍງານມາຍັງທ່ານຊາບ: ກ່ຽວກັບ ການຈັດຕັ້ງປະຕິບັດ ສາລະບານສິນຄ້າ ລຸ້ນປີ 2022 (AHTN 2022) ເຊິ່ງພາຍຫຼັງ ລັດຖະບານ ສປປ ລາວ ແລະ ກະຊວງການເງິນ ແມ່ນໄດ້ອອກດຳລັດ ແລະ ແຈ້ງການໃນການຈັດຕັ້ງປະຕິບັດຢ່າງເປັນທາງການແລ້ວນັ້ນ. ກົມພາສີໄດ້ສຳເລັດບັນດາໜ້າວຽກທີ່ຕິດພັນມີຄື:

1. ໄດ້ສຳເລັດ ການເຜີຍແຜ່ການປະກາດໃຊ້ສາລະບານສິນຄ້າ ແລະ ອັດຕາພາສີ ສະບັບດັ່ງກ່າວໃນແກ່ເຈົ້າໜ້າທີ່ພາສີ, ອົງການພາກລັດທີ່ກ່ຽວຂ້ອງ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄັ້ງທີ 01 ພາກກາງຈັດຂຶ້ນທີ່ ນະຄອນຫຼວງວຽງຈັນ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ຈາກ 04 ແຂວງພາກກາງ ຄື: ນະຄອນຫຼວງວຽງຈັນ, ແຂວງ ວຽງຈັນ, ແຂວງ ບໍລິຄຳໄຊ ແລະ ແຂວງ ຄຳມ່ວນ;
2. ໄດ້ສຳເລັດການແຈ້ງຢ່າງເປັນທາງການຕໍ່ກອງເລຂາອາຊຽນໃນການປະກາດແຈ້ງການຈັດຕັ້ງປະຕິບັດສາລະບານສິນຄ້າ ລຸ້ນປີ 2022 (AHTN 2022);
3. ໄດ້ສຳເລັດການ ການອັບໂຫຼດ ສາລະບານສິນຄ້າ ລຸ້ນປີ 2022 (AHTN 2022) ລົງໃນລະບົບອາຊີກຸດາ ASYCUDA ແລະ ຈັດຕັ້ງປະຕິບັດ ນັບຕັ້ງແຕ່ວັນທີ 17 ເມສາ 2023 ເປັນຕົ້ນມາໃນຂອບເຂດທົ່ວປະເທດ;

ສະນັ້ນ, ເພື່ອເປັນການເຜີຍແຜ່ຂໍ້ມູນ ແລະ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງສາມາດເຂົ້າເຖິງຂໍ້ມູນ ຈຶ່ງສະເໜີທ່ານພິຈາລະນາ ເພື່ອອັບໂຫຼດຂໍ້ມູນລົງໃນເວັບໄຊ www.laotradeportal.gov.la ຕາມທາງຄວນດ້ວຍ.

(ໄດ້ຄັດຕິດຂໍ້ມູນເປັນ QR ໂຄດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງການເງິນ ກົມພາສີ

ພູເຂົາຄຳ ວັນນະວົງໄຊ

ກະລຸນາດາວໂຫຼດເອກະສານຕາມລິ້ງ ແລະ QR ໂຄດ ນີ້:

https://docs.google.com/file/d/1G80xZcaAJaSSkMKHWo3nScrvdUb8TQA1/edit?usp=docslist_api&filetype=msexcel

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0637 /ກງ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2023

## ແຈ້ງການ

ເຖິງ: ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (AHTN 2022).

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 91/ນຍ, ລົງວັນທີ 16 ມັງກອນ 2023 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸ້ນປີ 2022 (AHTN 2022);
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ໜັງສືລາຍງານຂອງກົມພາສີ ສະບັບເລກທີ 00542/ກພສ, ລົງວັນທີ 24 ມັງກອນ 2023.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍເນື້ອໃນຂອງ ດຳລັດວ່າດ້ວຍການປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (ASEAN Harmonized Tarif Nomenclature-AHTN 2022) ໃຫ້ສອດຄ່ອງກັບລະບຽບການສາກົນ ແນ່ໃສ່ເປັນການອຳນວຍຄວາມສະດວກທາງດ້ານການຄ້າ ດ້ວຍການຮັບປະກັນຄວາມຖືກຕ້ອງ ຊັດເຈນ ແລະ ເປັນເອກະພາບກັນໃນການຈັດລະຫັດສິນຄ້າ, ເຄື່ອງຂອງໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ.

**ກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ສາລະບານສິນຄ້າລະບົບເອກະພາບ ອາຊຽນ ຮຸ່ນປີ 2022 (AHTN 2022) ເພື່ອປ່ຽນແທນສາລະບານສິນຄ້າລະບົບເອກະພາບ ຂອງອາຊຽນ ຮຸ່ນປີ 2017 (AHTN 2017) ທີ່ປະກາດໃຊ້ໂດຍ ດຳລັດ ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018;
2. ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (AHTN 2022) ປະກອບມີ 21 ພາກ, 97 ໝວດ, ມີທັງໝົດ 11.414 ລະຫັດ;
3. ມອບໃຫ້ກົມພາສີ ອອກບົດແນະນຳລະອຽດ ກ່ຽວກັບ ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບ ອາຊຽນ ຮຸ່ນປີ 2022 (AHTN 2022) ພ້ອມທັງ ເຜີຍແຜ່ ແລະ ຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ເຂົ້າໃຈ;
4. ສາລະບານສິນຄ້າລະບົບເອກະພາບອາຊຽນ ຮຸ່ນປີ 2022 (AHTN 2022) ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ມີນາ 2023 ເປັນຕົ້ນໄປ;
5. ແຈ້ງການ ສະບັບນີ້ໃຊ້ປ່ຽນແທນແຈ້ງການ ສະບັບເລກທີ 0394/ກງ, ລົງວັນທີ 07 ກຸມພາ 2023.

ດັ່ງນັ້ນ, ແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີ

ກະຊວງການເງິນ ລັດຖະມົນຕີ

ສັນຕິພາບ ພົມວິຫານ